











# ຄູ່ມື
# ການສ້າງລະບຽບຄຸ້ມຄອງ ຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ



ມັງກອນ 2009

## ບົດສະແດງຄວາມຂອບໃຈ

ຂໍສະແດງຄວາມຂອບໃຈມາຍັງທ່ານ **Eric Meusch, Roger Mollot** ແລະ ທີມງານ ທີ່ໄດ້ຮຽບຮຽງປື້ມຄູ່ມືສະບັບນີ້ຂຶ້ນມາຈາກປະສົບການ ການຈັດຕັ້ງປະຕິບັດໂຄງການ **ARL - Xe Kong Basin** ແລະ ໂຄງການ **ComFish** ຂອງ **WWF** ໂດຍການກວດແກ້ ແລະ ເພີ່ມຕື່ມເນື້ອໃນບາງສ່ວນຈາກ **ພະແນກຄຸ້ມຄອງການປະມົງ, ກົມລ້ຽງສັດ ແລະ ການປະມົງ, ຂະແໜງ ລ້ຽງສັດ ແລະ ການປະມົງ** ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ເຊກອງ ແລະ ອັດຕະປື. ນອກຈາກນີ້ **ບັນດາພະນັກງານປ່າໄມ້** ຈາກແຂວງບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ເຊກອງ ແລະ ອັດຕະປື ພ້ອມດ້ວຍ **ພະນັກງານຊັບພະຍາກອນນໍ້າຈືດ** ຂອງ **WWF** ປະຈໍາປະເທດລາວ ກໍ່ໄດ້ປະກອບສ່ວນໃນປື້ມຄູ່ມືສະບັບນີ້ເຊັ່ນດຽວກັນ.

**Suggested citation:**

DLF and WWF. 2009. Fisheries co-management guidelines. WWF, Vientiane. 20 pp.(Lao language)

ຮຽບຮຽງໂດຍ: **Eric Meusch, Roger Mollot** ແລະ ທີມງານ
ຮູບພາບໂດຍ: ໂຄງການ **ARL - Xe Kong** ແລະ **ComFish** ຂອງ **WWF, ຍົກເວັ້ນຮູບທີ່ມີຊື່ຕິດ**
ຜະລິດໂດຍ: **ພະແນກຄຸ້ມຄອງການປະມົງ, ກົມລ້ຽງສັດ ແລະ ການປະມົງ** ແລະ **WWF**
ສະໜັບສະໜູນໂດຍ: ໂຄງການ **ARL-Xe Kong Basin** ແລະ **ໂຄງການ ComFish**
ອອກແບບ ແລະ ຈັດໜ້າໂດຍ: **ນ້ອຍ ພຣົມສຸວັນ**

# ຄູ່ມື
# ການສ້າງລະບຽບຄຸ້ມຄອງ
# ຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ

ມັງກອນ 2009

# ບົດນຳ

ການປະມົງຢູ່ ສປປ ລາວ ປະກອບດ້ວຍກິດຈະກຳການຫາປາ ແລະ ການລ້ຽງປາ. ທັງສອງວຽກງານມີຄວາມສຳຄັນໃນການປະກອບສ່ວນເຂົ້າໃນວຽກງານການຄ້ຳປະກັນສະບຽງອາຫານ ແລະ ການສ້າງລາຍຮັບຂອງຄອບຄົວ, ເຊິ່ງປະຊາຊົນລາວໄດ້ນຳໃຊ້ຜົນຜະລິດທາງດ້ານການປະມົງ ເພື່ອເປັນອາຫານຕົ້ນຕໍ ຕອບສະໜອງທາດໂປຣຕີນ ຈາກສັດນ້ຳ ແລະ ເປັນສິນຄ້າເພື່ອສ້າງລາຍໄດ້ເສີມໃຫ້ແກ່ຄອບຄົວ ພ້ອມທັງປະກອບສ່ວນເຂົ້າໃນການສ້າງເສດຖະກິດຂອງຊາດ. ເນື່ອງຈາກ ສປປ ລາວອຸດົມຮັ່ງມີໄປດ້ວຍແຫຼ່ງນ້ຳຢູ່ລຽບຕາມແມ່ນ້ຳຂອງ ແລະ ສາຂາ ເຊິ່ງມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ແລະ ເປັນແຫລ່ງທີ່ຢູ່ອາໄສທີ່ສຳຄັນຂອງສັດນ້ຳ.

ການພັດທະນາຂະແໜງການປະມົງ ໂດຍການປັບປຸງດ້ານຄວາມປອດໄພ ແລະ ຜົນຜະລິດຈາກການລ້ຽງປາ ສົມທົບກັບກັບການຄຸ້ມຄອງ ແລະ ປົກປັກຮັກສາທຳມະຊາດຈາກບາດກ້າວສຳຄັນ ແກ່ການປະກອບສ່ວນເຂົ້າໃນແຜນພັດທະນາແຫ່ງຊາດ, ແຜນງານຫຼຸດຜ່ອນຄວາມທຸກຍາກ, ພັດທະນາສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ. ການພັດທະນາການລ້ຽງປາ ແລະ ຄຸ້ມຄອງການປະມົງແບບຍືນຍົງ ແມ່ນຕ້ອງໄດ້ປັບປຸງພ້ອມໆກັນ, ເພື່ອໃຫ້ໝັ້ນໃຈວ່າໄດ້ສະໜອງປາ, ສັດນ້ຳ ແລະ ຜະລິດຕະພັນຂອງມັນອື່ນໆທີ່ປອດໄພ ແລະ ເຊື່ອຖືໄດ້ແກ່ຜູ້ບໍລິໂພກ.

ຄູ່ມືສຳລັບການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ ແມ່ນເປັນບາດກ້າວທີ່ສຳຄັນ ໃນການສ້າງຄວາມເຂັ້ມແຂງດ້ານວິຊາການ ເພື່ອຄຸ້ມຄອງການປະມົງ ແລະ ປົກປັກຮັກສາຊີວະນາໆພັນສັດນ້ຳ ຢູ່ສປປ ລາວ. ປື້ມຄູ່ມືສະບັບນີ້ ແມ່ນຜົນສຳເລັດຂອງການຮ່ວມມື ລະຫວ່າງກົມ ລ້ຽງສັດ ແລະ ການປະມົງ ກັບກອງທຶນອະນຸລັກທຳມະຊາດໂລກ. ເນື້ອໃນຂອງປື້ມຫົວນີ້ແມ່ນອີງໃສ່ປະສົບການຕົວຈິງຂອງສອງພາກສ່ວນດ້ານການພັດທະນາ ແລະ ສົ່ງເສີມການປະມົງແບບມີສ່ວນຮ່ວມຢູ່ ສປປ ລາວກ ປື້ມຄູ່ມືສະບັບນີ້ຍັງເປັນເຄື່ອງມືທີ່ສຳຄັນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມົງອີກດ້ວຍ.

ຂ້າພະເຈົ້າເຊື່ອໝັ້ນວ່າປື້ມຄູ່ມືນີ້ຈະເປັນແຫລ່ງຂໍ້ມູນທີ່ສຳຄັນ ສຳລັບພະນັກງານວິຊາການຂັ້ນເມືອງ, ແຂວງ ແລະ ສູນກາງ ພ້ອມທັງນັກຮຽນຮູ້ປັນຍາຊົນ ຜູ້ທີ່ມີຄວາມສົນໃຈ ສຶກສາການຄົ້ນຄວ້າກ່ຽວກັບການຄຸ້ມຄອງຊັບພະຍາກອນສັດນ້ຳ ຢູ່ ສປປ ລາວ. ຄວາມສຳເລັດຈາກການຮ່ວມມືເພື່ອຄຸ້ມຄອງການປະມົງແມ່ນອົງປະກອບໜຶ່ງທີ່ມີຄວາມສຳຄັນຂອງກົດລະບຽບຂອງກົມລ້ຽງສັດ ແລະ ການປະມົງ. ປື້ມຄູ່ມືສະບັບນີ້ແມ່ນກະກຽມໄວ້ໃຫ້ແກ່ພະນັກງານວິຊາການ ແລະ ຊຸມຊົນ ເພື່ອເປັນພື້ນຖານໃນການສືບຕໍ່ພັດທະນາວຽກງານການຄຸ້ມຄອງການປະມົງຢູ່ ສປປ ລາວ

ດຣ. ບຸນຂວາງ ຄຳບຸນເຮືອງ<br>
ຫົວໜ້າ ກົມລ້ຽງສັດ ແລະ ການປະມົງ<br>
ກະຊວງ ກະສິກຳ ແລະ ປ່າໄມ້

# ສາລະບານ

**ການຄຸ້ມຄອງແບບມີສ່ວນຮ່ວມ**

**ຄູ່ມືສໍາລັບການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນໍ້າແບບມີສ່ວນຮ່ວມ**

**ຂັ້ນຕອນສໍາຄັນໃນການສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນໍ້າແບບມີສ່ວນຮ່ວມ**

**ຂັ້ນຕອນ 1**: ການສ້າງຄວາມເຂົ້າໃຈ ແລະ ເຫັນດີເຫັນພ້ອມຮ່ວມກັນ (ການຄັດເລືອກສະຖານທີ່, ການວິໄຈສະພາບການ, ການກໍານົດບັນຫາ ແລະ ການກໍານົດຈຸດປະສົງ)

**ຂັ້ນຕອນ 2**: ການຮ່າງກົດລະບຽບ

**ຂັ້ນຕອນ 3**: ການປັບປຸງລະບຽບທີ່ໄດ້ຮ່າງອອກມາໂດຍບ້ານ

**ຂັ້ນຕອນ 4**: ການປັບປຸງລະບຽບທີ່ໄດ້ຮ່າງອອກມາໂດຍບ້ານ ແລະ ເມືອງ

**ຂັ້ນຕອນ 5**: ເຈົ້າເມືອງຮັບຮອງເອົາລະບຽບການຄຸ້ມຄອງຊັບພະຍາກອນສັດນໍ້າ

**ຂັ້ນຕອນ 6**: ປະກາດນໍາໃຊ້ລະບຽບຂອງບ້ານຢ່າງເປັນທາງການ ກ່ຽວກັບ “ການຄຸ້ມຄອງຊັບພະຍາກອນສັດນໍ້າ”

**ບົດສະຫຼຸບ**

# ການຄຸ້ມຄອງແບບມີສ່ວນຮ່ວມ

ການຄຸ້ມຄອງແບບມີສ່ວນຮ່ວມໝາຍເຖິງການວາງແຜນແຕ່ລຸ່ມຫາເທິງ ໂດຍນຳໃຊ້ປະສົບການ ແລະຄວາມເຂົ້າໃຈຂອງຊຸມຊົນທ້ອງຖິ່ນເຂົ້າໃນການວາງແຜນການຄຸ້ມຄອງຊັບພະຍາກອນສັດນ້ຳ. ຂະບວນການຄຸ້ມຄອງແບບມີສ່ວນຮ່ວມແມ່ນຈະໄດ້ນຳໃຊ້ຄວາມຮູ້ ແລະ ການມີສ່ວນຮ່ວມຂອງຜູ້ທີ່ນຳໃຊ້ຊັບພະຍາກອນສັດນ້ຳເຂົ້າໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມລະບົບການຄຸ້ມຄອງ.

ໃນວຽກງານການຄຸ້ມຄອງຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ, ປະຊາຊົນຮ່ວມກັບອຳນາດການປົກຄອງທ້ອງຖິ່ນແມ່ນມີຄວາມຮັບຜິດຊອບຮ່ວມກັນໃນການສ້າງລະບຽບໃນການຄຸ້ມຄອງຊັບພະຍາກອນສັດນ້ຳ. ລະບຽບການຕ່າງໆທີ່ສ້າງຕັ້ງຂຶ້ນມາແມ່ນມີຂັ້ນຕອນການດຳເນີນງານທີ່ລະອຽດອ່ອນ ຜ່ານຂະບວນການກຳນົດ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນມີການປັບປຸງເນື້ອໃນໃຫ້ແທດເໝາະກັບສະພາບຕົວຈິງຂອງທ້ອງຖິ່ນນັ້ນໆ. ທຸກໆຂໍ້ຕົກລົງສຳລັບແຕ່ລະບຽບການຄຸ້ມຄອງແບບມີສ່ວນຮ່ວມແມ່ນມີລັກສະນະສະເພາະທີ່ສອງແສງໃຫ້ເຫັນເຖິງສະພາບຄວາມເປັນຈິງຂອງຊຸມຊົນທ້ອງຖິ່ນ ແລະ ນະໂຍບາຍຂອງພັກ-ລັດ.





# ຄູ່ມືສຳລັບການຄຸ້ມຄອງຊັບພະຍາກອນ ສັດນ້ຳແບບມີສ່ວນຮ່ວມ

ຄູ່ມືນີ້ແມ່ນໄດ້ສ້າງຂຶ້ນໂດຍການຮ່ວມມືລະຫວ່າງ ກົມລ້ຽງສັດ ແລະ ການປະມົງຮ່ວມກັບກອງທຶນ ອະນຸລັກທຳມະຊາດໂລກ (WWF). ຂັ້ນຕອນແລະ ວິທີການການດຳເນີນງານຕ່າງໆທີ່ລະບຸໄວ້ໃນຄູ່ ມືນີ້ແມ່ນຈະຊ່ວຍເປັນແນວທາງການປະຕິບັດໃຫ້ ແກ່ວຽກງານການສ້າງລະບຽບການຄຸ້ມຄອງຊັບ ພະຍາກອນສັດນ້ຳແບບມີສ່ວນຮ່ວມ, ເນື້ອຫາໃນ ຄູ່ມືສາມາດດັດແປງໄດ້ຕາມຄວາມຈຳເປັນ ແລະ ຄວາມເຂົ້າໃຈຂອງຜູ້ນຳໃຊ້ຊັບພະຍາກອນສັດ ນ້ຳໃນຊຸມຊົນ. ຂັ້ນຕອນຕ່າງໆທີ່ລະບຸໄວ້ດັ່ງລຸ່ມນີ້ ຈະສະແດງໃຫ້ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນເຫັນ ແລະ ເຂົ້າໃຈເຖິງບັນຫາສຳ ຄັນທີ່ຕ້ອງເອົາໃຈໃສ່ໃນຂະນະດຳເນີນແຕ່ລະຂັ້ນ ຕອນຂອງການສ້າງລະບຽບຄຸ້ມຄອງຊັບພະຍາ ກອນສັດນ້ຳ.

ຄູ່ມືນີ້ສາມາດເປັນແນວທາງການດຳເນີນງານໃຫ້ ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນນຳໃຊ້ ຮ່ວມກັນໃນການຄຸ້ມຄອງຊັບພະຍາກອນສັດ ນ້ຳ. ຄູ່ມືນີ້ ບໍ່ໄດ້ເຈາະຈົງໃຊ້ກັບຊຸມຊົນ ຜູ້ທີ່ມີ ຄວາມຕ້ອງການຢາກສ້າງວັງສະຫງວນສະເພາະ ໃນວັງນ້ຳເລິກເທົ່ານັ້ນ. ເຖິງແມ່ນວ່າຢູ່ວັງນ້ຳເລິກ ຈະເປັນແຫຼ່ງນ້ຳທີ່ສຳຄັນ, ແຕ່ແຫຼ່ງນ້ຳອື່ນໆເຊັ່ນ: ແກ້ງ, ຫ້ວຍ, ໜອງ, ຄອງ, ບຶງ ຫຼື ດິນບໍລິເວນນ້ຳ ກໍ່ອາດມີຄວາມສຳຄັນ ແລະ ຈຳເປັນຕ້ອງມີການ ຄຸ້ມຄອງເຊັ່ນດຽວກັນ. ດັ່ງນັ້ນ, ຄູ່ມືນີ້ ຈຶ່ງສາມາດ ໃຊ້ໄດ້ກັບທຸກໆຊຸມຊົນທີ່ມີຄວາມຕ້ອງການຢາກ ຄຸ້ມຄອງຊັບພະຍາກອນສັດນ້ຳໂດຍບໍ່ເລືອກປະ ເພດຂອງແຫຼ່ງນ້ຳ.

# ຂັ້ນຕອນສຳຄັນໃນການສ້າງລະບຽບຄຸ້ມຄອງຊັບພະຍາກອນສັດນ້ຳແບບມີສ່ວນຮ່ວມ



# Key Steps in developing regulations for Participatory Aquatic Resources Management



# ຂັ້ນຕອນສຳຄັນໃນການສ້າງລະບຽບຄຸ້ມຄອງຊັບພະຍາກອນກສັດນ້ຳແບບມີສ່ວນຮ່ວມ



## ຂັ້ນຕອນທີ 1: ການສ້າງຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນ

ຂັ້ນຕອນການສ້າງຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນພາຍໃນຊຸມຊົນດ້ວຍກັນ ເຊິ່ງຖືວ່າເປັນຫມາກຫົວໃຈສຳຄັນຂອງວຽກງານການສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳໃຫ້ປະສົບຜົນສຳເລັດ. ການຈັດກອງປະຊຸມຂັ້ນບ້ານແມ່ນຈະຊ່ວຍສ້າງຄວາມເຫັນດີ ແລະ ເປັນເອກະພາບກັນພາຍໃນຊຸມຊົນໂດຍຜ່ານຂະບວນການປຶກສາຫາລື, ການສົນທະນາ, ການກຳນົດບັນຫາແລະຊອກຫາວິທີການແກ້ໄຂໄດ້ດ້ວຍການຄຸ້ມຄອງຮ່ວມກັນ. ເພື່ອໃຫ້ໄດ້ຮັບຄວາມເຫັນດີ ແລະ ເຫັນພ້ອມຮ່ວມກັນຈາກຊຸມຊົນສິ່ງສຳຄັນທີ່ສຸດຄືຕ້ອງໃຫ້ຊຸມຊົນໄດ້ມີສ່ວນຮ່ວມໃນວຽກງານດັ່ງກ່າວ. ໃຫ້ຊຸມຊົນເກີດຄວາມຮູ້ສຶກວ່າແນວຄວາມຄິດຂອງເຂົາເຈົ້າມີສ່ວນຮ່ວມເຂົ້າໃນຂະບວນການສ້າງລະບຽບຂອງບ້ານກໍ່ຄືສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ.

*ການປະຕິບັດ*

- ຈັດກອງປະຊຸມບ້ານເພື່ອໃຫ້ຊາວບ້ານໄດ້ປຶກສາຫາລື ຫຼື ສົນທະນາກ່ຽວກັບຄວາມສຳຄັນຂອງການປະມົງ, ການນຳໃຊ້ຊີວະນາໆພັນສັດນ້ຳ ແລະ ການຄຸ້ມຄອງຊັບພະຍາກອນສັດນ້ຳແບບຍືນຍົງ.
- ຄັດເລືອກພື້ນທີ່ແຫຼ່ງນ້ຳທີ່ຈະສ້າງວັງສະຫງວນໄວ້ໂດຍນຳໃຊ້ແຜນທີ່ແຫຼ່ງນ້ຳ, ກຳນົດເອົາແຫຼ່ງນ້ຳທີ່ສຳຄັນ ແລະ ກຳນົດຂອບເຂດຊາຍແດນວັງສະຫງວນໄວ້ໃນລະບຽບຂອງບ້ານ.
- ສຶກສາສະພາບການເພື່ອໃຫ້ເຂົ້າໃຈການນຳໃຊ້ ແລະ ຄວາມສຳຄັນຂອງການປະມົງ.
- ສຶກສາບັນຫາ ເພື່ອໃຫ້ສາມາດກຳນົດຜົນກະທົບທີ່ເປັນໄພຂົ່ມຂູ່ ແລະ ໂອກາດ.
- ກຳນົດຈຸດປະສົງຂອງບ້ານເພື່ອເຮັດການຄຸ້ມຄອງການປະມົງແບບມີສ່ວນຮ່ວມໃນບ້ານ.



| ກິດຈະກຳ | ຜົນໄດ້ຮັບ |
| --- | --- |
| ▪ ຈັດກອງປະຊຸມບ້ານ.<br>▪ ສຳພາດຜູ້ຫາປາຊາຍ,ຍິງແລະເດັກນ້ອຍ.<br>▪ ລວບລວມຂໍ້ມູນກ່ຽວກັບລະບຽບການຄຸ້ມຄອງການຫາປາ.<br>▪ ສ້າງແຜນທີ່ແຫຼ່ງນ້ຳເພື່ອກຳນົດແຫຼ່ງນ້ຳທີ່ສຳຄັນ ສຳລັບການປະມົງ.<br>▪ ເກັບກຳຂໍ້ມູນເຄື່ອງມືຫາປາ, ຊະນິດພັນປາ ແລະ ຂໍ້ມູນການເຄື່ອນຍ້າຍຂອງປາ. | ▪ ເຫັນດີເຫັນພ້ອມ ແລະ ເຂົ້າໃຈຈຸດປະສົງຂອງການສ້າງລະບຽບການຄຸ້ມຄອງການປະມົງ.<br>▪ ເຂົ້າໃຈປັດໃຈ ແລະ ບັນຫາທີ່ສາມາດແກ້ໄຂໄດ້ດ້ວຍລະບຽບການຄຸ້ມຄອງການປະມົງ.<br>▪ ສ້າງຂໍ້ມູນຂ່າວສານດ້ານການປະມົງເພື່ອສາມາດໃຊ້ໃນການປັບປຸງລະບຽບການຄຸ້ມຄອງການປະມົງ. |

*ສິ່ງທີ່ສຳຄັນ*



- ຊາວບ້ານມີຄວາມສົນໃຈໃນການເຂົ້າຮ່ວມເຮັດການຄຸ້ມຄອງຊັບພະຍາກອນສັດນ້ຳບໍ?
- ຊາວບ້ານເຫັນຜົນປະໂຫຍດທີ່ຈະໄດ້ຮັບຈາກການຄຸ້ມຄອງຊັບພະຍາກອນສັດນ້ຳຫຍັງແດ່?
- ມີການຂັດແຍ່ງເກີດຂຶ້ນໃນສະຖານທີ່ຫາປາບໍ່? (ໂດຍສະເພາະຈາກຄົນພາຍນອກ, ການນຳໃຊ້ເຄື່ອງມືຫາປາທີ່ຜິດກົດໝາຍ ແລະ ອື່ນໆ)
- ປະຈຸບັນນີ້ມີການຄຸ້ມຄອງແນວໃດ? ແລະ ຜ່ານມາເຄີຍມີລະບົບການຄຸ້ມຄອງບໍ?
- ຊາວບ້ານຫາປາຢູ່ໃສ? ແຫຼ່ງນ້ຳແບບໃດ? (ວັງນ້ຳເລິກ, ແກ້ງຫາດ, ດິນບໍລິເວນນ້ຳ, ເຂດປ່ານ້ຳຖ້ວມຕາມລະດູການ, ຫ້ວຍ ແລະ ອື່ນໆ) ແລະ ຫາປາແບບໃດ? ຈຳນວນປາທີ່ຫາໄດ້? ຊະນິດປາທີ່ຫາໄດ້?
- ມີຄອບຄົວອື່ນໆ,ບ້ານອື່ນໆຫຼືຊົນເຜົ່າອື່ນໆສາມາດເຂົ້າໄປຫາໃນແຫຼ່ງນ້ຳຂອງບ້ານໄດ້ບໍ່?
- ມີເຄື່ອງມືຫາປາປະເພດໃດທີ່ຊາວບ້ານນຳໃຊ້ເຂົ້າໃນການຫາປາໃນແຕ່ລະແຫຼ່ງນ້ຳ? ແລະ ເຄື່ອງມືຫາປາດັ່ງກ່າວມີການປ່ຽນເຄື່ອງມືນຳໃຊ້ໄປຕາມລະດູການບໍ່? ເຄື່ອງມືຫາປາແຕ່ລະຊະນິດແມ່ນສາມາດຫາ ຫຼື ຈັບປາໄດ້ຊະນິດໃດແດ່? ການຈັບ ຫຼື ຫາປາແຕ່ລະຊະນິດມີການປ່ຽນໄປຕາມລະດູການບໍ່?
- ເຮົາຕ້ອງເຂົ້າໃຈຜູ້ທີ່ເຄີຍນຳໃຊ້ຊັບພະຍາກອນແຫລ່ງນ້ຳ ໂດຍສະເພາະແມ່ນປະຊາຊົນບ້ານອື່ນໆ ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈ ເຖິງສະພາບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນສັດນ້ຳຮ່ວມກັນ.



## ຂັ້ນຕອນ 2: ການຮ່າງກົດລະບຽບ



ການຊ່ວຍຊາວບ້ານໃນການສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ ຖືວ່າເປັນວຽກງານທີ່ລະອຽດອ່ອນທີ່ຈະຕ້ອງໄດ້ໃຊ້ເວລາໃນການພິຈາລະນາ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງເຂົ້າໃຈບັນຫາຕ່າງໆ. ໃນການຈັດຕັ້ງປະຕິບັດ (ໂດຍບໍ່ລວມເອົາຜູ້ທີ່ເຮັດການປະມົງແບບຖືກຕ້ອງແລ້ວ), ອາດມີບັນຫາເກີດຂຶ້ນກ່ຽວກັບການປະຕິບັດລະບຽບທີ່ບໍ່ ໄດ້ຮັບຜົນ, ເກີດມີຂໍ້ຂັດແຍ່ງພາຍໃນບ້ານ ແລະ ບ້ານຕໍ່ບ້ານ. ສິ່ງທຳອິດທີ່ຈະຕ້ອງປະຕິບັດແມ່ນຕ້ອງໃຫ້ຊຸມຊົນເກີດຄວາມເຂົ້າໃຈ ແລະ ເຫັນເຖິງຄຸນປະໂຫຍດຂອງການເຮັດລະບຽບການຄຸ້ມຄອງການປະມົງ, ໄດ້ຮັບການເຫັນດີເຫັນພ້ອມຈາກຜູ້ນຳໃຊ້ຊັບພະຍາກອນສັດນ້ຳ ເພື່ອໃຫ້ການສ້າງລະບຽບໄດ້ຮັບຜົນສຳເລັດທີ່ດີ. ການຮ່າງກົດລະບຽບການຄຸ້ມຄອງຊັບພະຍາກອນທາງນ້ຳຂອງບ້ານແມ່ນ ຕ້ອງໃຫ້ຊາວບ້ານເອງເປັນຜູ້ຮ່າງຂຶ້ນໂດຍຫ້ອງການກະສິກຳຂັ້ນເມືອງ ແລະ ແຂວງຈະເປັນພຽງຜູ້ໃຫ້ຄວາມຊ່ວຍເຫຼືອໃນວຽກງານດັ່ງກ່າວ. ການຮ່າງລະບຽບໃນເບື້ອງຕົ້ນສາມາດເຮັດເປັນກຸ່ມໃຫຍ່ ຫຼື ກຸ່ມນ້ອຍ ໂດຍມີຜູ້ຕາງໜ້າ ບ້ານເຂົ້າຮ່ວມ ແລະ ນຳເອົາເນື້ອໃນມະຕິກອງປະຊຸມທີ່ໄດ້ຮັບການເຫັນດີ ແລະ ເຫັນພ້ອມຮ່ວມກັນໃນເບື້ອງຕົ້ນ (ຈາກຂັ້ນຕອນທີ່ 1) ມາຮ່າງເປັນລະບຽບຂອງບ້ານ.

*ການປະຕິບັດ*

- ອະທິບາຍຂັ້ນຕອນໃນການສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳຂອງບ້ານ
- ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງໃນການປະຕິບັດວຽກງານ ການຄຸ້ມຄອງ (ເຊັ່ນ: ອຳນາດການປົກຄອງບ້ານ, ຫ້ອງການ ກະສິກຳ-ປ່າໄມ້ ເມືອງ ແລະ ພະແນກ ກະສິກຳ-ປ່າໄມ້ແຂວງ)
- ມີການສະເໜີເນື້ອໃນຂອງລະບຽບການຄຸ້ມຄອງທີ່ໄດ້ຮ່າງຂຶ້ນມາໃຫ້ ຊຸມຊົນຮັບຊາບຄືນ ເພື່ອຄວາມກະຈ່າງແຈ້ງນຳກັນ, ຮັບຟັງຂໍ້ສະເໜີ ຫຼື ຄຳຄິດຄຳເຫັນຕ່າງໆ ເພື່ອຈະໄດ້ນຳໄປເຮັດການປັບປຸງແກ້ໄຂ.

*ເນື້ອໃນລະບຽບຂອງບ້ານຕ້ອງປະກອບດ້ວຍ:*

- ຈຸດປະສົງຂອງບ້ານກ່ຽວກັບການສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ.
- ຊັບພະຍາກອນສັດນ້ຳທີ່ມີພາຍໃນບ້ານ.
- ການນຳໃຊ້ ແລະ ລະບົບການຄຸ້ມຄອງຊັບພະຍາກອນສັດນ້ຳພາຍໃນບ້ານ.
- ລາຍລະອຽດ ກ່ຽວກັບລະບຽບການຕ່າງໆ.
- ມີການລະບຸໄວ້ລະອຽດກ່ຽວກັບມາດຕະການ ການກ່າວເຕືອນ, ການປັບໄໝ ແລະ ການລົງໂທດ.
- ມີການລະບຸໜ້າທີ່ຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງໄວ້ຢ່າງລະອຽດໃນລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ.



| ກິດຈະກຳ | ຜົນໄດ້ຮັບ |
|---|---|
| ▪ ຈັດກອງປະຊຸມບ້ານເພື່ອໃຫ້ຊາວບ້ານໄດ້ສົນທະນາກ່ຽວກັບການຄຸ້ມຄອງການປະມົງ ແລະ ຮ່າງລະບຽບ ຂອງບ້ານ. | ▪ ຮ່າງລະບຽບ (ສາມາດເຮັດສະເພາະບ້ານດຽວ ຫຼື ມີຫຼາຍບ້ານເຮັດຮ່ວມກັນ) ອະທິບາຍຈຸດປະສົງ, ຄວາມເປັນມາຂອງບ້ານ ແລະ ການນຳໃຊ້ຊີວະນາໆພັນທາງນ້ຳ, ຂໍ້ຫ່ວງຫ້າມ ແລະ ຂອບເຂດຊາຍແດນ, ການຕັກເຕືອນ,ການປັບໄໝ, ມາດຕະການລົງໂທດ ແລະ ອຳນາດໃນການດຳເນີນການ. |

*<u>ສິ່ງທີ່ສຳຄັນ</u>*

- ມີໃຜແດ່ເຂົ້າຮ່ວມການສ້າງລະບຽບຂອງບ້ານ? ແມ່ນໃຜທີ່ບໍ່ໄດ້ເຂົ້າຮ່ວມ? ມີຊາວປະມົງໄດ້ເຂົ້າຮ່ວມໃນການຮ່າງລະບຽບນຳບໍ່?
- ຄວນພິຈາລະນາເອົາຂໍ້ມູນຈາກແມ່ຍິງ, ຄອບຄົວທີ່ທຸກຍາກ ແລະ ຊົນເຜົ່ານ້ອຍໆເຊັ່ນດຽວກັນ.
- ຖ້າການຕົກລົງຫາກບໍ່ສາມາດກ້າວໄປຮອດການສ້າງລະບຽບການຄຸ້ມຄອງການປະມົງໄດ້ກໍ່ໃຫ້ເລື່ອນເວລາອອກໄປກ່ອນ.

## ຂັ້ນຕອນ 3: ການປັບປຸງລະບຽບທີ່ໄດ້ຮ່າງອອກມາໂດຍບ້ານ



ພາຍຫຼັງທີ່ລະບຽບຂອງບ້ານໄດ້ຮ່າງອອກມາແລ້ວ, ກໍ່ຈະໃຫ້ຊຸມຊົນ(ຫຼືຊາວບ້ານ)ກວດຄືນເນື້ອໃນຂອງລະບຽບທີ່ຮ່າງຂຶ້ນມາວ່າຖືກຕ້ອງຕາມທີ່ໄດ້ຕົກລົງກັນຮ່າງຂຶ້ນໃນເບື້ອງຕົ້ນ ຫຼື ບໍ່, ມີສິ່ງໃດແດ່ທີ່ຕ້ອງການປັບປຸງແກ້ໄຂເພີ່ມຕື່ມ. ການທວນຄືນຮ່າງລະບຽບ ແມ່ນຄວນໃຫ້ອຳນາດການປົກຄອງບ້ານເປັນຜູ້ຮັບຜິດຊອບ ໃນການສະເໜີຜ່ານລາຍລະອຽດຂອງລະບຽບທີ່ຮ່າງອອກມາໃຫ້ຊຸມຊົນໄດ້ຮັບຟັງຄືນພ້ອມທັງຮັບຟັງຂໍ້ສະເໜີ ແລະ ຄວາມຄິດເຫັນຕ່າງໆຂອງຊາວບ້ານ. ການປັບປຸງ ຫຼື ດັດແກ້ຮ່າງລະບຽບແມ່ນຈະເຮັດບົນພື້ນຖານຄວາມຕ້ອງການຂອງຊາວບ້ານສະເໜີມາ. ສ່ວນພະນັກງານວິຊາການກະສິກຳ-ປ່າໄມ້ເມືອງ ແລະ ແຂວງແມ່ນຈະໃຫ້ຄວາມຊ່ວຍເຫຼືອຊາວບ້ານ ໃນວຽກງານດ້ານເອກະສານ.

*ການປະຕິບັດ*

- ຈັດກອງປະຊຸມບ້ານໂດຍໃຫ້ອຳນາດການປົກຄອງບ້ານສະເໜີຜ່ານແຕ່ລະຫົວຂໍ້ຂອງລະບຽບ ແລະ ຮັບຟັງ ຂໍ້ສະເໜີແນະຕ່າງໆເພື່ອທົບທວນ ແລະ ປັບປຸງແກ້ໄຂ.
- ປັບປຸງຮ່າງລະບຽບບົນພື້ນຖານຂໍ້ມູນທີ່ໄດ້ຮັບການຂໍ້ສະເໜີຕ່າງໆຂອງຊາວບ້ານ.

| ກິດຈະກຳ | ຜົນໄດ້ຮັບ |
|---|---|
| ▪ ຈັດກອງປະຊຸມບ້ານເພື່ອອະທິບາຍກ່ຽວກັບການສ້າງລະບຽບແລະມີໃຜແດ່ຄວນເຂົ້າຮ່ວມ.<br>▪ ສົນທະນາກ່ຽວກັບຮ່າງລະບຽບຮ່ວມກັບຊາວບ້ານ, ຊາວປະມົງ ແລະ ບ້ານທີ່ຢູ່ອ້ອມຂ້າງ.<br>▪ ບັນທຶກຂໍ້ມູນກ່ຽວກັບຄວາມຄິດຄວາມເຫັນຂອງກຸ່ມທີ່ແຕກຕ່າງເພື່ອເຮັດການປັບປຸງແກ້ໄຂເນື້ອໃນຂອງຮ່າງລະບຽບ. | ▪ ຮ່າງລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳ (ທີ່ໄດ້ຮັບການກວດແກ້ ແລະ ປັບປຸງແກ້ໄຂບົນພື້ນຖານຂໍ້ມູນປ້ອນກັບຈາກຊາວບ້ານ). |



*ສິ່ງທີ່ສຳຄັນ*

- ພາກສ່ວນໃດແດ່ທີ່ມີສ່ວນກ່ຽວຂ້ອງກັບກ່ຽວກັບລະບຽບການ?
- ພາກສ່ວນໃດແດ່ບໍ່ໄດ້ມີສ່ວນກ່ຽວຂ້ອງ?
- ລະບຽບການດັ່ງກ່າວທີ່ໄດ້ສ້າງຂຶ້ນມາແລ້ວມີຄວາມຂັດແຍ່ງກັບກຸ່ມໃດແດ່? ແລະ ບ້ານໃດແດ່?

## ຂັ້ນຕອນ 4: ການປັບປຸງລະບຽບທີ່ໄດ້ຮ່າງອອກມາ ໂດຍບ້ານ ແລະ ເມືອງ



ຈັດກອງປະຊຸມໃຫ້ບ້ານສະເໜີລະບຽບທີ່ເຂົາເຈົ້າໄດ້ເຮັດການປັບປຸງແລ້ວໃຫ້ພາກສ່ວນກ່ຽວຂ້ອງທາງຂັ້ນເມືອງຮັບຮູ້ເພື່ອພິຈາລະນາ ແລະ ປະກອບຄຳຄິດຄຳເຫັນຕື່ມ. ສືບຕໍ່ໃຫ້ມີການສົນທະນາເພື່ອຮັບຟັງຂໍ້ມູນເພີ່ມຕື່ມຈາກການສະເໜີຂໍ້ຄິດເຫັນຈາກຊຸມຊົນ ເພື່ອເຮັດໃຫ້ລະບຽບຂອງບ້ານເປັນທີ່ຍອມຮັບ ແລະ ມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດ. ການສົນທະນາລະດັບຊຸມຊົນຄວນມີບ້ານອື່ນ ຫຼື ບ້ານອ້ອມຂ້າງ, ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງເຊັ່ນ: ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການປົກຄອງເມືອງ, ທະຫານເມືອງ, ຕຳຫຼວດເມືອງ ແລະ ອື່ນໆເຂົ້າຮ່ວມ. ໃຫ້ບ້ານສະເໜີລາຍລະອຽດຂອງລະບຽບທີ່ຮ່າງອອກມາແຕ່ລະມາດຕາ, ການເຫັນດີເຫັນພ້ອມ ແລະ ການຮັບຮອງເອົາ. ການພິຈາລະນາແກ້ໄຂຮ່າງລະບຽບເພີ່ມຕື່ມແມ່ນອາດມີຄວາມຈຳເປັນຕ້ອງເຮັດບົນພື້ນຖານຂໍ້ມູນທີ່ໄດ້ຈາກຫຼາຍໆພາກສ່ວນ. ໃນໄລຍະດຳເນີນກອງປະຊຸມຕ້ອງມີການບັນທຶກຂໍ້ສະເໜີຕ່າງໆ ແລະ ຂໍ້ຕົກລົງເຫັນດີເຫັນພ້ອມຕໍ່ກັບຮ່າງລະບຽບທີ່ໄດ້ປັບປຸງແກ້ໄຂ.

*ການປະຕິບັດ*

- ເປີດກອງປະຊຸມເຜີຍແຜ່ຮ່າງລະບຽບທີ່ໄດ້ຮັບການປັບປຸງ, ຮັບຟັງຂໍ້ຄິດເຫັນຕ່າງໆ ແລະ ການຮັບຮອງເອົາ.

| 1. ກິດຈະກຳ | 2. ໃຜເຂົ້າຮ່ວມ | 3. ຜົນໄດ້ຮັບ |
|---|---|---|
| ▪ ຈັດກອງປະຊຸມຊາວບ້ານເພື່ອສະເໜີຄືນເນື້ອ ໃນລາຍລະອຽດ ຂອງຮ່າງລະບຽບ.<br>▪ ປັບປຸງແກ້ໄຂລະບຽບບົນພື້ນຖານຂໍ້ສະເໜີ ແລະ ຄວາມຄິດເຫັນທີ່ໄດ້ຮັບຈາກຊາວບ້ານ. | ▪ ຊາວບ້ານ.<br>▪ ອຳນາດການປົກຄອງບ້ານ.<br>▪ ຫ້ອງການກະສິກຳ-ປ່າໄມ້ເມືອງ.<br>▪ ຫ້ອງການປົກຄອງເມືອງ.<br>▪ ຫ້ອງການທະຫານເມືອງ.<br>▪ ຫ້ອງການຕຳຫຼວດເມືອງ.<br>▪ ຫ້ອງການສານເມືອງ.<br>▪ ຕາງໜ້າບ້ານທີ່ຢູ່ອ້ອມຂ້າງ.<br>▪ ພະແນກກະສິກຳ-ປ່າໄມ້ແຂວງ. | ▪ ການຮັບຮອງເອົາລະບຽບໂດຍມີບ້ານທີ່ຢູ່ອ້ອມຂ້າງ, ພາກສ່ວນກ່ຽວຂ້ອງຂັ້ນເມືອງເຊັ່ນ: ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການປົກຄອງເມືອງ, ສານ,ທະຫານ, ຕຳຫຼວດ ແລະ ອື່ນໆໄດ້ມີການຮັບຮູ້ລະບຽບດັ່ງກ່າວຮ່ວມກັນ. |



*ສິ່ງທີ່ສຳຄັນ*

- ການສະແດງອອກຂອງຊຸມຊົນໃນກອງປະຊຸມ ຖືວ່າເປັນສິ່ງສຳຄັນໃນການສ້າງຄວາມເປັນເຈົ້າການໃນ ການຮ່າງລະບຽບ.
- ກອງປະຊຸມຈະໄດ້ຮັບຜົນດີກໍ່ຕໍ່ເມື່ອທຸກໆຄົນໃນຊຸມຊົນແລະພາກສ່ວນອ້ອມຂ້າງເມືອງເຂົ້າຮ່ວມນຳກັນ.

## ຂັ້ນຕອນ 5: ທາງເມືອງຮັບຮອງເອົາລະບຽບການ ຄຸ້ມຄອງຊັບພະຍາກອນສັດນ້ຳ

ເມື່ອເນື້ອໃນລະບຽບຂອງບ້ານໄດ້ປັບປຸງສຳເລັດ ແລ້ວກໍ່ຈະໄດ້ເຮັດການຈັດພິມເປັນປຶ້ມ, ຫຼັງຈາກ ນັ້ນ, ອຳນາດການປົກຄອງບ້ານກໍ່ເຮັດໃບສະເໜີ ເຖິງຫ້ອງການກະສິກຳ-ປ່າໄມ້ເມືອງ ເພື່ອເຊັນຮັບ ຮອງເອົາລະບຽບດັ່ງກ່າວແລ້ວ, ຫ້ອງການກະສິກຳ-ປ່າໄມ້ເມືອງກໍ່ຈະສະເໜີຕໍ່ເຖິງທ່ານເຈົ້າເມືອງ ເພື່ອເຊັນຮັບຮອງ ການນຳໃຊ້ຮ່າງລະບຽບຢ່າງເປັນ ທາງການໂດຍທ່ານເຈົ້າເມືອງຈະໄດ້ອອກຂໍ້ຕົກລົງ ການນຳໃຊ້ລະບຽບຢ່າງເປັນທາງການໃຫ້.

*ການປະຕິບັດ*

- ກະກຽມເອກະສານໃຫ້ອຳນາດການປົກຄອງບ້ານ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງເຊັນຢັ້ງຢືນ.
- ຮ່າງລະບຽບສະບັບທີ່ສົມບູນແລ້ວຕ້ອງມີລາຍເຊັນຢັ້ງຢືນ ແລະ ຮັບຮອງຈາກອຳນາດການປົກຄອງບ້ານ, ຫ້ອງການກະສິກຳ-ປ່າໄມ້ ເມືອງ ແລະ ເຈົ້າເມືອງ.
- ກະກຽມເຮັດປ້າຍລະບຽບການຄຸ້ມຄອງ ແລະ ຕິດຕັ້ງໃນບ້ານພ້ອມທັງເຮັດພິທີປະກາດນຳໃຊ້ລະບຽບການຄຸ້ມຄອງຢ່າງເປັນທາງການ.



| ກິດຈະກຳ | ຜົນໄດ້ຮັບ |
|---|---|
| ▪ ຮ່າງລະບຽບບ້ານມີລາຍເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານແລ້ວເຮັດໃບສະເໜີເຖິງຫ້ອງການກະສິກຳ-ປ່າໄມ້ເມືອງ. ຫ້ອງການ ກະສິກຳ-ປ່າໄມ້ເມືອງເຊັນຢັ້ງຢືນແລະຮັບຮອງເອົາລະບຽບແລ້ວສະເໜີຕໍ່ໄປຍັງທ່ານເຈົ້າເມືອງ.<br>▪ ເມື່ອທ່ານເຈົ້າເຊັນຢັ້ງຢືນ ແລະ ຮັບຮອງເອົາລະບຽບຂອງບ້ານແລ້ວ ກໍ່ຈະເຮັດຂໍ້ຕົກລົງການນຳໃຊ້ລະບຽບຂອງບ້ານຢ່າງເປັນທາງການ. | ▪ ລະບຽບຂອງບ້ານຮັບຮອງໂດຍຫ້ອງການກະສິກຳ-ປ່າໄມ້ເມືອງ. |



*<u>ສິ່ງທີ່ສຳຄັນ</u>*

ການເຊັນຮັບຮອງເອົາລະບຽບຂອງບ້ານ ຖືວ່າເປັນຂັ້ນຕອນທີ່ສຳຄັນທີ່ສຸດ, ເຊິ່ງໃນແຕ່ລະເມືອງອາດມີຂັ້ນຕອນການດຳເນີນການທີ່ແຕກຕ່າງກັນເຊັ່ນ: ບາງເມືອງແມ່ນຕ້ອງໃຫ້ມີລາຍເຊັນຈາກຄະນະພັກບ້ານ ແລະ ອຳນາດການປົກຄອງບ້ານ, ບາງເມືອງບໍ່ຈຳເປັນໃຫ້ຫ້ອງການກະສິກຳ-ປ່າໄມ້ ເມືອງ ເຊັນຮັບຮອງແຕ່ສາມາດສົ່ງໂດຍກົງໃຫ້ທ່ານເຈົ້າເມືອງເຊັນຮັບຮອງເອົາເລີຍ ເຊິ່ງການປະຕິບັດຂັ້ນຕອນຕ່າງໆ ແມ່ນຈະໄດ້ອີງໃສ່ກັບສະພາບຕົວຈິງຂອງແຕ່ລະພື້ນທີ່.

## ຂັ້ນຕອນ 6: ປະກາດນຳໃຊ້ລະບຽບຂອງບ້ານຢ່າງເປັນທາງການກ່ຽວກັບ "ການຄຸ້ມຄອງຊັບພະຍາກອນສັດນ້ຳ"



ການປະກາດໃຫ້ຊຸມຊົນຮັບຮູ້ການນຳໃຊ້ລະບຽບການຄຸ້ມຄອງຊັບພະຍາກອນສັດນ້ຳຂອງບ້ານ ແມ່ນຖືວ່າເປັນຂັ້ນຕອນທີ່ສຳຄັນ ເພື່ອໃຫ້ແນ່ໃຈວ່າລະບຽບຂອງບ້ານຈະໄດ້ຮັບການປະຕິບັດຢ່າງແທ້ຈິງ ແລະ ຫຼີກລ້ຽງຄວາມຂັດແຍ່ງທີ່ອາດຈະເກີດຂຶ້ນ (ຍ້ອນບໍ່ໄດ້ຂໍ້ມູນຂ່າວສານ). ການປະກາດນຳໃຊ້ລະບຽບຂອງບ້ານໃຫ້ມະຫາຊົນຮັບຮູ້ ແມ່ນຈະເຮັດໃຫ້ບ້ານດັ່ງກ່າວເກີດຄວາມພາກພູມໃຈໃນຄວາມພະຍາຍາມຂອງເຂົາເຈົ້າທີ່ມີຄວາມຮັບຜິດຊອບສູງໃນການນຳໃຊ້ຊັບພະຍາກອນສັດນ້ຳ ແລະ ການປົກປັກຮັກສາຊີວະນາໆພັນ. ວຽກງານດັ່ງກ່າວຍັງເປີດໂອກາດໃຫ້ຊຸມຊົນໄດ້ມີການແລກປ່ຽນຂໍ້ມູນບ້ານກັບບ້ານ ເພື່ອຫາແນວທາງປະຕິບັດການຄຸ້ມຄອງຊັບພະຍາກອນສັດນ້ຳທີ່ໃຫ້ໄດ້ຮັບຜົນດີທີ່ສຸດ ແລະ ທັງເປັນການສົ່ງເສີມໃຫ້ບ້ານອື່ນໆລິເລີ່ມຕ້ອງການຢາກສ້າງລະບຽບຄຸ້ມຄອງໃນເຂດບໍລິເວນແຫຼ່ງນ້ຳຂອງເຂົາເຈົ້າ. ພິທີປະກາດນຳໃຊ້ລະບຽບຂອງບ້ານຄວນມີການເຜີຍແຜ່ຄື ເນື້ອໃນຂອງລະບຽບດັ່ງກ່າວພ້ອມທັງແຈກຢາຍສຳເນົາລະບຽບຂອງບ້ານໃຫ້ອົງການຈັດຕັ້ງພາຍໃນບ້ານ, ບ້ານອ້ອມຂ້າງ ແລະ ພາກສ່ວນກ່ຽວຂ້ອງຂັ້ນເມືອງ, ມີການອອກຂ່າວທາງໂທລະພາບ, ວິທະຍຸ ແລະ ໜັງສືພິມຕ່າງໆອີກດ້ວຍ.

*ການປະຕິບັດ*

- ເມື່ອລະບຽບຂອງບ້ານໄດ້ຮັບຮອງຢ່າງເປັນທາງການແລ້ວ ຂັ້ນຕໍ່ໄປແມ່ນຈະປະກາດໃຫ້ຊຸມຊົນຮັບຮູ້.
- ຕິດຕັ້ງຫຼັກຂອບເຂດ ປ້າຍກົດລະບຽບວັງສະຫງວນ.
- ແຈກຢາຍສຳເນົາລະບຽບຂອງບ້ານ ໃຫ້ອົງການຈັດຕັ້ງພາຍໃນ ແລະ ບ້ານອ້ອມຂ້າງ.
- ຕົ້ນສະບັບລະບຽບຂອງບ້ານແມ່ນຈະໄດ້ແຈກຢາຍໄປຫາພາກສ່ວນທີ່ກ່ຽວຂ້ອງ




ເຊັ່ນ: ອຳນາດການ ປົກຄອງບ້ານ, ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການ ປົກຄອງເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ.

| 1. ກິດຈະກຳ | 2. ໃຜເຂົ້າຮ່ວມ | 3. ຜົນໄດ້ຮັບ |
|---|---|---|
| ▪ ແຈກຢາຍສຳເນົາລະບຽບບ້ານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ.<br>▪ ເກັບເອກະສານຕົ້ນສະບັບໄວ້ບ່ອນທີ່ໄດ້ຕົກລົງກັນ.<br>▪ ແຈ້ງການກ່ຽວກັບການປະກາດນຳໃຊ້ລະບຽບຂອງບ້ານຜ່ານສື່ຂອງເມືອງ.<br>▪ ຈັດພິທີປະກາດລະບຽບ ແລະ ຕິດຕັ້ງປ້າຍວັງສະຫງວນ. | ▪ ຊາວບ້ານ.<br>▪ ອຳນາດການປົກຄອງບ້ານ.<br>▪ ຫ້ອງການກະສິກຳ-ປ່າໄມ້ເມືອງ.<br>▪ ຫ້ອງການປົກຄອງເມືອງ ແລະພາກສ່ວນທີ່ກ່ຽວຂ້ອງ.<br>▪ ພະແນກກະສິກຳ ແລະ ປ່າໄມ້ ແຂວງ.<br>▪ ອົງການຈັດຕັ້ງໃນບ້ານ.<br>▪ ບ້ານອ້ອມຂ້າງ. | ▪ ປະກາດເນື້ອໃນລະບຽບຂອງບ້ານໃຫ້ຊຸມຊົນຮັບຮູ້ ແລະ ຕັ້ງປ້າຍວັງສະຫງວນຂອງບ້ານ.<br>▪ ແຈກຢາຍສຳເນົາລະບຽບຂອງບ້ານໃຫ້ບ້ານອ້ອມຂ້າງ, ຫ້ອງການກະສິກຳ-ປ່າໄມ້ເມືອງ, ຫ້ອງການທະຫານເມືອງ, ຫ້ອງການຕຳຫຼວດເມືອງ ແລະ ຫ້ອງການປົກຄອງເມືອງ.<br>▪ ອອກຂ່າວທາງໂທລະພາບ, ວິທະຍຸ ແລະ ໜັງສືພິມ.<br>▪ ແຈ້ງໃຫ້ຊຸມຊົນທົ່ວໄປຮັບຊາບກ່ຽວກັບລະບຽບຂອງບ້ານ. |

*<u>ສິ່ງທີ່ສຳຄັນ</u>*

- ຄວາມຂັດແຍ່ງຕ່າງໆສາມາດຫຼີກລ້ຽງໄດ້ ຖ້າຫາກຊາວບ້ານເອງ ແລະ ບ້ານໃກ້ຄຽງໄດ້ຮັບຊາບຂໍ້ມູນທີ່ຈະແຈ້ງ ກ່ຽວກັບການນຳໃຊ້ລະບຽບຂອງບ້ານ.



## ສະຫຼຸບ

ຂັ້ນຕອນການຈັດຕັ້ງປະຕິບັດຕ່າງໆ ກ່ຽວກັບແນວທາງການ ສ້າງລະບຽບການຄຸ້ມຄອງຊັບພະຍາກອນສັດນໍ້າແບບມີສ່ວນຮ່ວມທີ່ໄດ້ລະບຸໄວ້ຂ້າງເທິງໂດຍຫຍໍ້ເຊິ່ງເລີ່ມແຕ່ຂັ້ນຕອນການຈັດຕັ້ງປະຕິບັດຈົນເຖິງການຮັບຮອງເອົາລະບຽບການຄຸ້ມຄອງຊັບພະຍາກອນສັດນໍ້າຢ່າງເປັນທາງການ. ການສ້າງປຶ້ມຄູ່ມືຂຶ້ນມານີ້ ເພື່ອໃຫ້ ສາມາດນໍາໃຊ້ເປັນແນວທາງໃນການຈັດຕັ້ງປະຕິບັດ ໂດຍສາມາດປັບປຸງ ຫຼື ປ່ຽນແປງໄປໄດ້ຕາມຄວາມເໝາະສົມຂອງສະພາບຕົວຈິງ, ທັງນີ້ເພື່ອເປັນການກະຕຸ້ນຊຸກຍູ້ໃຫ້ຊຸມຊົນເຂົ້າມີສ່ວນຮ່ວມ, ຊຸກຍູ້ຄວາມເປັນເຈົ້າການ ແລະ ເພື່ອໃຫ້ການນໍາໃຊ້ລະບຽບການຄຸ້ມຄອງຊັບພະຍາກອນສັດນໍ້າມີຄວາມສັກສິດ.

ສິ່ງສໍາຄັນໃນຂະບວນການສ້າງລະບຽບແມ່ນເພື່ອໃຫ້ບັນລຸຕາມຈຸດປະສົງ ແລະ ສາມາດແກ້ໄຂບັນຫາຂອງຊຸມຊົນ. ຕາມທໍາມະດາການທົບທວນເນື້ອໃນລະບຽບ ແມ່ນເປັນສິ່ງສໍາຄັນ (ຢ່າງນ້ອຍ 3 ປີເທື່ອໜຶ່ງ) ເພື່ອປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເພື່ອທຽບໃສ່ກັບຈຸດປະສົງພ້ອມດຽວກັນ ບັນຫາທີ່ເກີດຂຶ້ນໃໝ່ຕໍ່ວຽກງານການຄຸ້ມຄອງ ແລະ ການນໍາໃຊ້ຊັບພະຍາກອນສັດນໍ້າ. ລະບຽບການຄຸ້ມຄອງຂອງທ້ອງຖິ່ນ ອາດມີຄວາມຈໍາເປັນຕ້ອງມີການປັບປຸງແກ້ໄຂເປັນໄລຍະໆ ເພື່ອໃຫ້ແທດເໝາະກັບສະພາບປະຈຸບັນ ແລະ ບັນຫາທີ່ເກີດຂຶ້ນກັບຊັບພະຍາກອນສັດນໍ້າ.

ຈຸດປະສົງທີ່ກໍານົດຂຶ້ນມາໂດຍການເຫັນດີເຫັນພ້ອມຂອງຊຸມຊົນຖືວ່າເປັນສິ່ງສໍາຄັນ ແລະ ຊຸມຊົນຈະຕ້ອງໄດ້ເຂົ້າຮ່ວມໃນການກວດກາໃນແຕ່ລະໄລຍະເພື່ອໃຫ້ການປະຕິບັດໄດ້ຮັບຜົນດີ. ວຽກງານນີ້ເອີ້ນວ່າ ການຕິດຕາມ ແລະ ການປະເມີນຜົນແບບມີສ່ວນຮ່ວມ ເຊິ່ງໃນນັ້ນແມ່ນການນໍາໃຊ້ແນວຄວາມຄິດ ແລະ ບົດຮຽນຂອງຊຸມຊົນເຂົ້າໃນການກໍານົດ ແລະ ວັດແທກກ່ຽວກັບຜົນຂອງການຄຸ້ມຄອງຂອງເຂົາເຈົ້າ. ສິ່ງທີ່ຄວນຈະເຮັດທໍາອິດແມ່ນການທົບທວນຄືນເປັນປະຈໍາ ກ່ຽວກັບລະບຽບຂອງບ້ານ ແລະ ສະພາບການຈັດຕັ້ງປະຕິບັດພາຍໃນຊຸມຊົນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ບ້ານໃກ້ຄຽງ. ທຸກໆການປ່ຽນແປງ ແລະ ປັບປຸງແກ້ໄຂ ຄວນໄດ້ຮັບອະນຸຍາດທາງຫ້ອງການກະສິກໍາ-ປ່າໄມ້ເມືອງ ແລະ ເຊັນຮັບຮອງຈາກທ່ານເຈົ້າເມືອງ ພ້ອມທັງປະກາດໃຫ້ມະຫາຊົນຮັບຊາບ.

ການພັດທະນາລະບົບການຄຸ້ມຄອງການປະມົງ ແລະ ການນໍາໃຊ້ຊັບພະຍາກອນສັດນໍ້າແບບມີສ່ວນຮ່ວມແມ່ນໄດ້ສືບຕໍ່ມີການກວດແກ້ ແລະ ປັບປຸງແກ້ໄຂໃຫ້ແທດເໝາະກັບຄວາມຕ້ອງການຂອງຊຸມຊົນ ແລະ ອົງການຈັດຕັ້ງຂອງລັດໂດຍຮ່ວມກັນວາງແຜນຍຸດທະສາດ ເພື່ອເຮັດແນວໃດໃຫ້ຊັບພະຍາກອນສັດນໍ້າຢູ່ ສ ປປ ລາວ ໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ.

ສອບຖາມຂໍ້ມູນເພີ່ມຕື່ມ


ກົມລ້ຽງສັດ ແລະ ການປະມົງ
ພະແນກຄຸ້ມຄອງການປະມົງ

ໂທຣ: +856 21 215142
ແຟັກຊ: +856 21 215141

ທ່ານ ບຸນມາ ຫລວງອາມາດ
ທ່ານ ອາຄະເນ ພົມສຸວັນ

ກອງທຶນອະນຸລັກທຳມະຊາດໂລກ
ແຜນງານປະຈຳພາກພື້ນແມ່ນ້ຳຂອງ

ໂທຣ: +856 21 216080
+856 21 262833
ແຟັກຊ: +856 21 251883

ທ່ານ Eric Meusch
ທ່ານ Roger Mollot
eric.meusch@wwfgreatermekong.org
roger.mollot@wwfgreatermekong.org
panda.org/laos